ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2501

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2501 /ອຄ.ຄພນ

ນະຄອນຫລວງວຽງຈັນ, ວັນທີ 16 DEC 2015

# ຄຳສັ່ງ
## ຂອງລັດຖະມົນຕີວ່າການ
## ກ່ຽວກັບການຕິດສະຫຼາກສິນຄ້າ ເປັນພາສາລາວ

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ ປີ 2011.
- ອີງຕາມຂໍ້ຕົກລົງວ່າດ້ວຍອີງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 1746/ອຄ.ຄພນ, ລົງວັນທີ 23 ສິງຫາ 2012.

ເພື່ອຜັນຂະຫຍາຍ ເນື້ອໃນຂອງ ມາດຕາ 18, 19, 20, 60 ແລະ 61 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 ໃຫ້ເປັນອັນລະອຽດ ເຮັດໃຫ້ຜູ້ຈັດຕັ້ງປະຕິບັດ ຢູ່ຂັ້ນທ້ອງຖິ່ນ ເຂົ້າໃຈແຈ້ງກ່ຽວກັບພາລະບົດບາດຂອງຕົນ ໃນວຽກງານການຄຸ້ມຄອງ ແລະ ຕິດຕາມການຕິດສະຫຼາກສິນຄ້າເປັນພາສາລາວ, ແນໃສ່ເຮັດໃຫ້ຜູ້ຜະລິດຢູ່ພາຍໃນ ແລະນຳເຂົ້າຈາກຕ່າງປະເທດ ຕ້ອງຕິດສະຫຼາກເປັນພາສາລາວກ່ອນຈຶ່ງຈຳໜ່າຍ, ເພື່ອໃຫ້ຜູ້ຊົມໃຊ້ເຂົ້າໃຈກ່ຽວກັບສັບພະຄຸນ ແລະ ຄຸນນະພາບຂອງສິນຄ້າ ກ່ອນຈະເລືອກຊື້ ແລະ ຊົມໃຊ້ເພື່ອຫຼີກລ້ຽງການຊົມໃຊ້ສິນຄ້າທີ່ບໍ່ໄດ້ຄຸນນະພາບ, ເສຍຄຸນ ຫຼື ສັບພະຄຸນ ບໍ່ຖືກຕ້ອງຕາມຈຸດປະສົງຂອງຜູ້ຊົມໃຊ້, ປ້ອງກັນບໍ່ໃຫ້ມີ ຜົນກະທົບທີ່ບໍ່ດີ ຕໍ່ສຸຂະພາບ, ຊັບສິນ ຂອງຜູ້ຊົມໃຊ້ ແລະ ສິ່ງແວດລ້ອມ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງດັ່ງນີ້:**

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການອຸດສາຫະກຳ ແລະການຄ້າເມືອງພາຍໃນແຂວງ, ນະຄອນຫຼວງຂອງຕົນລົງເຜີຍແຜ່ ແລະ ແນະນຳໃຫ້ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກແລະຂາຍຍ່ອຍສິນຄ້າ ໃຫ້ຕິດສະຫຼາກສິນຄ້າເປັນພາສາລາວດັ່ງນີ້:

1) ຜູ້ຜະລິດ, ຜູ້ປະກອບ, ປຸງແຕ່ງ, ຫຸ້ມຫໍ່ ສິນຄ້າຢູ່ ສປປ ລາວ,ຜູ້ນຳເຂົ້າ ແລະ ຈຳໜ່າຍສິນຄ້າທີ່ຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ຫຼື ເປັນຕົວແທນຈຳໜ່າຍສິນຄ້າໃດໜຶ່ງຕ້ອງຕິດສະຫຼາກສິນຄ້າເປັນພາສາລາວກ່ອນຈຶ່ງຈຳໜ່າຍໃຫ້ຜູ້ຊົມໃຊ້ ຫຼື ສະໜອງໃຫ້ຜູ້ຂາຍຍ່ອຍ. ຖ້າເຈົ້າໜ້າທີ່ກວດກາການຄ້າພົບເຫັນ ສິນຄ້າທີ່ສະໜອງນັ້ນບໍ່ໄດ້ຕິດສະຫຼາກເປັນພາສາລາວ ຈະຖືກກ່າວເຕືອນ, ປັບໃໝ, ໃຫ້ໂຈະ ຫຼື ຖອນໃບທະບຽນວິສາຫະກິດ.

2) ຜູ້ດຳເນີນທຸລະກິດການຄ້າຂາຍຍ່ອຍ:ການຮັບເອົາສິນຄ້າມາຈຳໜ່າຍ ໃຫ້ຮັບເອົາສິນຄ້າທີ່ຕິດສະຫຼາກທີ່ເປັນພາສາລາວເທົ່ານັ້ນ. ພ້ອມນີ້ ກໍ່ຕ້ອງວາງຂາຍສິນຄ້າ ທີ່ໄດ້ຕິດສະຫຼາກເປັນພາສາລາວ. ຖ້າເຈົ້າໜ້າທີ່ກວດກາການຄ້າພົບເຫັນສິນຄ້າທີ່ວາງຂາຍບໍ່ໄດ້ຕິດສະຫຼາກເປັນພາສາລາວ ຈະຖືກກ່າວເຕືອນ, ປັບໃໝ, ຍຶດ ຫຼື ອາຍັດສິນຄ້າດັ່ງກ່າວ.

3) ສຳລັບສິນຄ້າທີ່ໄດ້ຜະລິດ ຫລື ນຳເຂົ້າມາຈຳໜ່າຍ ກ່ອນປະກາດໃຊ້ຄຳສັ່ງສະບັບນີ້ ຜູ້ຂາຍຍ່ອຍຕ້ອງປະສານເອົາສະຫຼາກທີ່ເປັນພາສາລາວ ນຳຜູ້ທີ່ສະໜອງສິນຄ້າໃຫ້ຄືນ. ຖ້າຜູ້ສະໜອງສິນຄ້າ ບໍ່ສາມາດຈັດພິມໃຫ້ໄດ້ ແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ ຈະສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງລົງໄປກວດກາ ແລະ ບັນທຶກສິນຄ້າດັ່ງກ່າວ. ຫຼັງຈາກນັ້ນ ຈະຕິດຕາມການຈຳໜ່າຍເປັນແຕ່ລະໄລຍະຈົນກວ່າຈະຈຳໜ່າຍສິນຄ້າເຫຼົ່ານັ້ນໝົດໄປ.

2. ເນື້ອໃນຂອງສະຫຼາກ ຕ້ອງປະກອບມີເນື້ອໃນຕົ້ນຕໍຕາມທີ່ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 ຄືດັ່ງນີ້:

   1) ປະເພດ ຫຼື ຊະນິດສິນຄ້າ;
   2) ເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນຂອງຜູ້ຜະລິດ ແລະ ຜູ້ນຳເຂົ້າ ເພື່ອຈຳໜ່າຍ;
   3) ສະຖານທີ່ຜະລິດ ແລະ ຜູ້ນຳເຂົ້າເພື່ອຈຳໜ່າຍ, ຊື່ປະເທດຜະລິດສິນຄ້າ;
   4) ລາຄາ, ຈຳນວນ, ປະລິມານ, ຄຸນນະພາບ, ບໍລິມາດ, ສ່ວນປະກອບທີ່ກຳນົດແຈ້ງອັດຕາສ່ວນປະກອບ,ຂໍ້ແນະນຳວິທີນຳໃຊ້, ຄຳເຕືອນ, ວັນ,ເດືອນ,ປີ ຜະລິດ ແລະ ວັນໝົດອາຍຸນຳໃຊ້.

3. ການຕິດສະຫຼາກຕ້ອງຕິດໃຫ້ແໜ້ນ, ຕິດຢູ່ບ່ອນເຫັນໄດ້ງ່າຍ ແລະ ຕ້ອງຕິດໃສ່ທັງສິນຄ້າ ແລະ ຫີບຫໍ່ ຫຼືສິ່ງບັນຈຸຕ່າງໆ. ສິນຄ້ານຳເຂົ້າຈາກຕ່າງປະເທດ ເນື້ອໃນຂອງສະຫຼາກທີ່ເປັນພາສາລາວ ຕ້ອງຖືກກັບເນື້ອໃນຂອງສະຫຼາກທີ່ເປັນພາສາຕ່າງປະເທດ.

4. ສິນຄ້າທີ່ຖືກຍົກເວັ້ນ ການຕິດສະຫຼາກຕາມທີ່ກຳນົດໃນຄຳສັ່ງສະບັບນີ້ ມີຄືດັ່ງນີ້:

   1) ສິນຄ້າທີ່ນຳເຂົ້າຊົ່ວຄາວເພື່ອສົ່ງອອກຕໍ່, ສິນຄ້ານຳເຂົ້າຊົ່ວຄາວ ເພື່ອວາງສະແດງໃນງານຕະຫຼາດນັດ ຫຼັງຈາກນັ້ນສົ່ງອອກຄືນ, ສິນຄ້າຜ່ານແດນ;
   2) ຂອງຂັວນ ແລະ ຂອງຕ້ອນ;
   3) ສິນຄ້າທີ່ເປັນສະບຽງອາຫານສົດ, ສະບຽງອາຫານທີ່ປຸງແຕ່ງ ແຕ່ບໍ່ມີການຫຸ້ມຫໍ່ ແລະ ຂາຍໂດຍກົງໃຫ້ຜູ້ຊົມໃຊ້;
   4) ສິນຄ້າທີ່ເປັນວັດຖຸດິບ ທີ່ບໍ່ມີການຫຸ້ມຫໍ່ ນຳເຂົ້າເພື່ອສະໜອງໃຫ້ການຜະລິດໃນໂຮງງານ ຫຼື ການ ກໍ່ສ້າງ.

5. ການປະຕິບັດມາດຕະການຕໍ່ທີ່ຜູ້ລະເມີດ ຕໍ່ຄຳສັ່ງສະບັບນີ້ ໃຫ້ປະຕິບັດມາດຕະການຄືດັ່ງນີ້:

   1) ຄັ້ງທີໜຶ່ງໃຫ້ຕັກເຕືອນ ແລະ ເຮັດບົດບັນທຶກເຊັນຮັບຮູ້ການລະເມີດ;

2) ການລະເມີດຄັ້ງທີສອງໃຫ້ດຳເນີນການປັບໃໝແຕ່ຫ້າແສນກີບຫາໜຶ່ງລ້ານກີບ (500.000 ກີບ-1.000.000 ກີບ) ສຳລັບຮ້ານຄ້າຂາຍຍ່ອຍ. ແຕ່ຫ້າລ້ານກີບຫາເຈັດລ້ານກີບ (5.000.000 ກີບ-7.000.000 ກີບ) ສຳລັບຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຜູ້ເປັນຕົວແທນຈຳໜ່າຍ;

4) ການລະເມີດຄັ້ງທີສາມໃຫ້ດຳເນີນການປັບໃໝແຕ່ໜຶ່ງລ້ານກີບຫາສອງລ້ານກີບ ( 1.000.000 ກີບ-2.000.000 ກີບ) ແລະອາຍັດສິນຄ້າທີ່ວາງຂາຍ ທີ່ບໍ່ໄດ້ຕິດສະຫຼາກເປັນພາສາລາວ ສຳລັບຮ້ານຄ້າຂາຍຍ່ອຍ. ແຕ່ເຈັດລ້ານກີບຫາເກົ້າລ້ານກີບ (7.000.000 ກີບ-9.000.000 ກີບ) ພ້ອມທັງໃຫ້ໂຈະ ຫຼື ຖອນ ໃບທະບຽນວິສາຫະກິດ ສຳລັບຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຜູ້ເປັນຕົວແທນຈຳໜ່າຍ.

6. ກຳນົດເວລາ ການເລີ່ມປະຕິບັດມາດຕະການຕໍ່ຜູ້ລະເມີດ ໃຫ້ປະຕິບັດດັ່ງນີ້:

   1) ສຳລັບຮ້ານຄ້າຂາຍຍ່ອຍ ແມ່ນໃຫ້ເລີ່ມປະຕິບັດ ພາຍຫຼັງ 3 ເດືອນນັບແຕ່ມື້ທີ່ຄຳສັ່ງສະບັບນີ້ ມີຜົນສັກສິດເປັນຕົ້ນໄປ;

   2) ຜູ້ຜະລິດສິນຄ້າຢູ່ພາຍໃນ, ຜູ້ນຳເຂົ້າ ແລະ ຈຳໜ່າຍສິນຄ້າ ທີ່ຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ຫຼື ເປັນຕົວແທນຈຳໜ່າຍສິນຄ້າໃດໜຶ່ງແມ່ນໃຫ້ເລີ່ມປະຕິບັດ ພາຍຫຼັງ 2 ເດືອນນັບແຕ່ມື້ທີ່ຄຳສັ່ງສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

7. ພາຍຫຼັງຈັດຕັ້ງປະຕິບັດ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຮັບຊາບປະຈຳທຸກ 03 ເດືອນ, ຖ້າຫາກພົບຂໍ້ຫຍຸ້ງຍາກ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ໃຫ້ຮີບດ່ວນລາຍງານຂໍທິດຊີ້ນຳ ຈາກລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອໃຫ້ທິດຊີ້ນຳວິທີການແກ້ໄຂ.

8. ມອບໃຫ້ກົມການຄ້າພາຍໃນຕາງໜ້າໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຕິດຕາມແລະໃຫ້ຄຳແນະນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

9. ຫ້າມບໍ່ໃຫ້ເຈົ້າໜ້າທີ່ກວດກາການຄ້າແລະພະນັກງານລັດທີ່ກ່ຽວຂ້ອງດຳເນີນມາດຕະການຕໍ່ຜູ້ລະເມີດກ່ອນກຳນົດເວລາທີ່ກຳນົດໄວ້ໃນຂໍ້ 6 ຂອງຄຳສັ່ງສະບັບນີ້ຢ່າງເດັດຂາດ.

10. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ (15) ວັນ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ຄຸນນາງ ເຂັມມະນີ ພົນເສນາ

# ເນື້ອໃນໂດຍຫຍໍ້ຂອງຄໍາສັ່ງກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ

ເຖິງ: ບັນດາຫົວໜ່ວຍທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຊາບທົ່ວເຖິງກັນວ່າ.

ເພື່ອຜັນຂະຫຍາຍ ເນື້ອໃນຂອງ ມາດຕາ 18, 19, 20, 60 ແລະ 61 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010. ແນໃສ່ເຮັດໃຫ້ຜູ້ຜະລິດຢູ່ພາຍໃນ, ນໍາເຂົ້າ, ຜູ້ຂາຍຍົກ, ຜູ້ຂາຍຍ່ອຍ ແລະ ຕົວແທນຈໍາໜ່າຍ ຕ້ອງຕິດໄດ້ສະຫຼາກສິນຄ້າເປັນພາສາລາວ ກ່ອນຈໍາໜ່າຍ, ເພື່ອໃຫ້ຜູ້ຊົມໃຊ້ເຂົ້າໃຈກ່ຽວກັບສັບພະຄຸນ ຄຸນນະພາບ ແລະ ມາດຕະຖານຂອງສິນຄ້າ ລວມທັງຄໍາເຕືອນ ແລະ ຄໍາແນະນໍາຕ່າງໆ ຊຶ່ງມີເນື້ອໃນໂດຍຫຍໍ້ ດັ່ງນີ້:

1. ຜູ້ຜະລິດຢູ່ພາຍໃນ, ນໍາເຂົ້າ, ຜູ້ຂາຍຍົກ, ຜູ້ຂາຍຍ່ອຍ ແລະ ຕົວແທນຈໍາໜ່າຍໃດໜຶ່ງ ຕ້ອງຕິດສະຫຼາກສິນຄ້າເປັນພາສາລາວ ກ່ອນຈຶ່ງຈໍາໜ່າຍໃຫ້ຜູ້ຊົມໃຊ້ ຫຼື ສະໜອງໃຫ້ຜູ້ຂາຍຍ່ອຍ ພາຍໃນ ສປປ ລາວ.

2. ຜູ້ດໍາເນີນທຸລະກິດການຄ້າຂາຍຍ່ອຍ: ກ່ອນຮັບເອົາສິນຄ້າມາຈໍາໜ່າຍ ໃຫ້ຮັບເອົາສິນຄ້າທີ່ຕິດສະຫຼາກທີ່ເປັນພາສາລາວເທົ່ານັ້ນ. ພ້ອມນີ້ ກໍ່ຕ້ອງວາງຂາຍສິນຄ້າ ທີ່ໄດ້ຕິດສະຫຼາກເປັນພາສາລາວ.

3. ສໍາລັບສິນຄ້າທີ່ຜະລິດ ຫຼື ນໍາເຂົ້າ ມາຈໍາໜ່າຍ ພາຍໃນ ສປປ ລາວ ກ່ອນປະກາດໃຊ້ຄໍາສັ່ງສະບັບນີ້ ຜູ້ຂາຍຍ່ອຍຕ້ອງປະສານເອົາສະຫຼາກທີ່ເປັນພາສາລາວ ນໍາຜູ້ທີ່ສະໜອງສິນຄ້າໃຫ້ຕົນ. ຖ້າຜູ້ສະໜອງສິນຄ້າ ບໍ່ສາມາດສະໜອງສະຫຼາກພາສາລາວໃຫ້ໄດ້. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫລວງ ສົມທົບກັບ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງລົງໄປກວດກາ ແລະ ບັນທຶກສິນຄ້າດັ່ງກ່າວ. ຫຼັງຈາກນັ້ນ ຈະມີການຕິດຕາມການຈໍາໜ່າຍເປັນແຕ່ລະໄລຍະ ຈົນກວ່າການຈໍາໜ່າຍສິນຄ້າເຫຼົ່ານັ້ນໝົດໄປ.

4. ເນື້ອໃນຂອງສະຫຼາກ ຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1) ປະເພດ ຫຼື ຊະນິດສິນຄ້າ; 2) ເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນຂອງຜູ້ຜະລິດ ແລະ ຜູ້ນໍາເຂົ້າ ເພື່ອຈໍາໜ່າຍ; 3) ສະຖານທີ່ຜະລິດ ແລະ ຜູ້ນໍາເຂົ້າເພື່ອຈໍາໜ່າຍ, ຊື່ປະເທດຜະລິດສິນຄ້າ; 4) ລາຄາ, ຈໍານວນ, ປະລິມານ, ຄຸນນະພາບ, ບໍລິມາດ, ສ່ວນປະກອບທີ່ກໍານົດແຈ້ງອັດຕາສ່ວນປະກອບ,ຂໍ້ແນະນໍາວິທີນໍາໃຊ້, ຄໍາເຕືອນ, ວັນ,ເດືອນ,ປີ ຜະລິດ ແລະ ວັນໝົດອາຍຸນໍາໃຊ້. ການຕິດສະຫຼາກຕ້ອງຕິດໃຫ້ແໜ້ນ, ຕິດຢູ່ບ່ອນເຫັນໄດ້ງ່າຍ ແລະ ຕ້ອງຕິດໃສ່ທັງສິນຄ້າ ແລະ ຫີບຫໍ່ ຫຼືສິ່ງບັນຈຸຕ່າງໆ. ສໍາລັບສິນຄ້ານໍາເຂົ້າຈາກຕ່າງປະເທດ ເນື້ອໃນຂອງສະຫຼາກທີ່ເປັນພາສາລາວ ຕ້ອງຖືກກັບເນື້ອໃນຂອງສະຫຼາກທີ່ເປັນພາສາຕ່າງປະເທດ.

5. **ສິນຄ້າທີ່ຖືກຍົກເວັ້ນ ການຕິດສະຫຼາກຕາມທີ່ກໍານົດໃນຄໍາສັ່ງສະບັບນີ້ ມີຄືດັ່ງນີ້:**

1) ສິນຄ້າທີ່ນໍາເຂົ້າຊົ່ວຄາວເພື່ອສົ່ງອອກຕໍ່, ສິນຄ້ານໍາເຂົ້າຊົ່ວຄາວ ເພື່ອວາງສະແດງໃນງານຕະຫຼາດນັດ ຫຼັງຈາກນັ້ນສົ່ງອອກຄືນ, ສິນຄ້າຜ່ານແດນ; 2) ຂອງຂັວນ ແລະ ຂອງຕ້ອນ; 3) ສິນຄ້າທີ່ເປັນສະບຽງອາຫານສົດ, ສະບຽງອາຫານທີ່ປຸງແຕ່ງ ແຕ່ບໍ່ມີການຫຸ້ມຫໍ່ ແລະ ຂາຍໂດຍກົງໃຫ້ຜູ້ຊົມໃຊ້; 4) ສິນຄ້າທີ່ເປັນວັດຖຸດິບ ທີ່ບໍ່ມີການຫຸ້ມຫໍ່ ນໍາເຂົ້າເພື່ອສະໜອງໃຫ້ການຜະລິດໃນໂຮງງານ ຫຼື ການກໍ່ສ້າງ.

6. **ຄໍາສັ່ງສະບັບນີ້ມີຜົນບັງຄັບໃຊ້**

- ສໍາລັບຮ້ານຄ້າຂາຍຍ່ອຍແມ່ນມີຜົນບັງຄັບໃຊ້ ເລີ່ມແຕ່ ວັນທີ 14 ເມສາ 2016 ເປັນຕົ້ນໄປ.
- ສໍາລັບຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ຂາຍຍົກ ແລະ ຜູ້ເປັນຕົວແທນຈໍາໜ່າຍ ແມ່ນມີຜົນບັງຄັບໃຊ້ ເລີ່ມແຕ່ ວັນທີ 14 ມີນາ ເປັນຕົ້ນໄປ.

ຖ້າເຈົ້າໜ້າທີ່ກວດກາການຄ້າພົບເຫັນ ສິນຄ້າທີ່ສະໜອງນັ້ນບໍ່ໄດ້ຕິດສະຫຼາກເປັນພາສາລາວ ຮ້ານຄ້າຂາຍຍ່ອຍ, ຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ຂາຍຍົກ ແລະ ຜູ້ເປັນຕົວແທນຈໍາໜ່າຍ ຈະຖືກກ່າວເຕືອນ, ປັບໃໝ, ໃຫ້ໂຈະ ຫຼື ຖອນໃບທະບຽນວິສາຫະກິດ.